ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ



ສຳນັກງານໃຫຍ່

ເລກທີ: 0771 /ທຄຕລ 2023

ນະຄອນຫຼວງວຽງຈັນ, ວັນທີ: 23 FEB 2023

## ໜັງສືແຈ້ງເຊີນ

**ເຖິງ:** ບໍລິສັດ ບໍລິການສິ່ງພິມ ແລະ ບັນດາໂຮງພິມ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນສິ່ງພິມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ຜະລິດ ສິ່ງພິມ ເພື່ອນຳໃຊ້ ເຂົ້າໃນວຽກງານ ຂອງ ທຄຕລ ລາຍລະອຽດສິນຄ້າ ມີດັ່ງຕາຕະລາງຄັດຕິດລຸ່ມນີ້:

❖ **ເງື່ອນໄຂຂອງບໍລິສັດ, ໂຮງພິມພາກລັດ ແລະ ເອກະຊົນ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

➢ **ເອກະສານ ຊອງທີ 01:**

1. ປະກອບເອກະສານໃນນາມນິຕິບຸກຄົນ, ດຳເນີນທຸລະກິດ ຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021 ແລະ ຮ່າງແບບຟອມຂອງ ທຄຕລ ທີ່ຄັດຕິດມາພ້ອມນີ້ ກຳນົດຍື່ນລາຍລະອຽດຂ້າງເທິງ ສາມາດຍື່ນໄດ້ນັບຈາກ ວັນນີ້ ເຖິງ ວັນສຸກ ວັນທີ 03/03/2023 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ E-mail: procurement@bcel.com.la
2. ສຳລັບລາຍການໃດ ທີ່ຜູ້ສະໜອງສົນໃຈເຂົ້າຮ່ວມປະມູນແມ່ນໃຫ້ເອົາສິນຄ້າຕົວຢ່າງ (ສິນຄ້າຕົວຢ່າງ ຢ່າງລະ 1-2 ອັນ) ສົ່ງກ່ອນ ວັນຄານ ທີ 07/03/2023 ໂດຍມາສົ່ງທີ ປ່ອງບໍລິການຂາເຂົ້າ-ຂາອອກ, ພະແນກ ຫ້ອງການບໍລິຫານ-ການເງິນ, ຊັ້ນ 04, ອາຄານ C, ທຄຕລ ສຳນັກງານໃຫຍ່.

➢ **ເອກະສານ ຊອງທີ 02 (ປິດຊອງ):**

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມ ໃນວັນພະຫັດ, ທີ 16/03/2023 ເວລາ 09:00 ໂມງ ທີ່ ຊັ້ນ 05, ອາຄານ C, ທຄຕລ ສຳນັກງານໃຫຍ່.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ, ລະບຸຈຳນວນມື້ກຳນົດຈັດສົ່ງສິນຄ້າຂອງແຕ່ລະລາຍການ (ຫົວໜ່ວຍເປັນ "ວັນ" ບໍ່ໃຫ້ລະບຸເປັນ "ວັນລັດຖະການ") ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວພ້ອມ (Expire date) ຢ່າງໜ້ອຍ 30 ວັນ.

**<u>ໝາຍເຫດ:</u>**

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

2. ການຊຳລະແມ່ນ ຈ່າຍເງິນ ຕາມມູນຄ່າສັ່ງຊື້ແຕ່ລະລາຍການ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.
3. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ (ບໍ່ໄດ້ຄັດເລືອກເອົາມູນຄ່າລວມຂອງທຸກລາຍການສິນຄ້າ), ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າຢ່າງດຽວ.
4. ສາມາດມາເບິ່ງຕົວຢ່າງສິນຄ້າ/ສິ່ງພິມ ໄດ້ ທີ່ ປ່ອງບໍລິການຂາເຂົ້າ-ຂາອອກ, ພະແນກຫ້ອງການບໍລິຫານ-ການເງິນ, ຊັ້ນ 4, ອາຄານ C, ສຳນັກງານໃຫຍ່ ທຄຕລ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ເບີໂທປະສານງານ: 021 213 200-414

ນ. ສາຍສະພອນ ຈັນທະຈັກ

| No. | ລາຍການ | ລາຍລະອຽດ | ການຫຸ້ມຫໍ່ | ຫົວໜ່ວຍ | Bidding |
|---|---|---|---|---|---|
| 1 | ເຈ້ຍກໍ້ຮູດ EDC S90 | ກວ້າງ 5,7ຊມ, ຜ່າສູນກາງ 3,7ຊມ, ຮູແກນ 1,2 ຊມ, ເຈ້ຍເທີມໍ 54gsm ພິມ 1 ສີ | 100 ກໍ້/ແກັດ | ກໍ້ | 10.000 |
| 2 | ເຈ້ຍຫົວຈົດໝາຍພາສາລາວ_ມີເລກທີ | ຂະໜາດ A4 21*29,7 ຊມ, ເຈ້ຍປອນ 80 gsm, ພິມ 4 ສີ 1 ໜ້າ | 100 ໃບ/ຫໍ່ນ້ອຍ, 5 ຫໍ່ນ້ອຍ/ແພັກ, 5 ແພັກ/ມັດ | ໃບ | 10.000 |
| 3 | ເຈ້ຍຫົວຈົດໝາຍພາສາລາວ ບໍ່ມີເລກທີ | ຂະໜາດ A4 21*29,7 ຊມ, ເຈ້ຍປອນ 80 gsm, ພິມ 4 ສີ 1 ໜ້າ | 100 ໃບ/ຫໍ່ນ້ອຍ, 5 ຫໍ່ນ້ອຍ/ແພັກ, 5 ແພັກ/ມັດ | ໃບ | 4.000 |
| 4 | ເຈ້ຍຫົວຈົດໝາຍພາສາລາວ_ມີແຕ່ທ້າຍ-ບໍ່ມີຫົວ | ຂະໜາດ A4 21*29,7 ຊມ, ເຈ້ຍປອນ 80 gsm, ພິມ 4 ສີ 1 ໜ້າ | 100 ໃບ/ຫໍ່ນ້ອຍ, 5 ຫໍ່ນ້ອຍ/ແພັກ, 5 ແພັກ/ມັດ | ໃບ | 3.000 |
| 5 | ຊອງຂາວຍາວ BCEL | 23,5*11 ຊມ, ພິມ 4 ສີ 1 ໜ້າ | 50 ຊອງ/ແພັກ, 10ແພັກ/ແກັດ | ຊອງ | 15.000 |
| 6 | ໃບແຈ້ງປະເພດເງິນມອບ-ແດງ | ເຈ້ຍປອນ 55gsm, ຂະໜາດ 9*20,5ຊມ ພິມ 1 ສີ 1 ໜ້າ | 50ໃບ/ຫົວ, 10 ຫົວ/ຫໍ່, 5 ຫໍ່/ແພັກ | ຫົວ | 300 |
| 7 | ໃບແຈ້ງປະເພດເງິນຮັບ(ຟ້າ) | ເຈ້ຍປອນ 70gsm, ຂະໜາດ 9*19,5ຊມ ພິມ 1 ສີ 1 ໜ້າ | 50ໃບ/ຫົວ, 10 ຫົວ/ຫໍ່, 5 ຫໍ່/ແພັກ | ຫົວ | 2.000 |
| 8 | ຟອມ Money gram (ຮັບ) | ເຈ້ຍເຄມີ 2 ໃບ/ຊຸດ, ຂະໜາດ 17,2 * 21,5 ຊມ, ພິມ 4 ສີ-ດ້ານໜ້າ, ດ້ານຫຼັງພິມ 1 ສີ (ທັງສອງໃບ) ກາວແຍກຊຸດ | 500 ຊຸດ/ຫໍ່, 5ຫໍ່/ມັດ | ຊຸດ | 150.000 |
| 9 | ປາງລັອກ ສີແດງລ້ວນ ພິມໂລໂກ້ ທຄຕລ 01 ຈຸດ | -Serial Number 09 ຕົວເລກ ສີຂາວ<br>- Serial Number 00000xxxx-xxxxxx<br>-Material: PP<br>-Total Length: 300 mm<br>-Printing area (ຂະໜາດໂລໂກ້): 48*25 mm<br>-Average tensile strength (ຄວາມແຮງ): 245 N<br>-Packing 1.000 PCS<br>-Carton dimension | - ແພັກຖົງລະ 50 ເສັ້ນ = 200 ຖົງ, ແຕ່ລະຖົງ ໝາຍເລກລຳດັບ 1-200 ພ້ອມລະບຸເລກ Serial Number ໃສ່ຖົງດ້ານໜ້າ | ອັນ | 10.000 |
| 10 | ເຈ້ຍກາວຮັດປອກເງິນ | ກໍເຈ້ຍກາວຮັດປອກເງິນ: ຍາວ 100 ແມັດ/ກໍ, ຂະໜາດ 20 * 76 ມມ, ແກນຮອບໃນ 7,9 ຊມ ແລະ ແກນຮອບນອກ 11 ຊມ. "ພ້ອມລະບຸລາຍລະອຽດສິນຄ້າດ້ານນອກກ່ອງ" ສິນຄ້າຮັບປະກັນ ໄລຍະ 06 ເດືອນ. | ການຫຸ້ມຫໍ່: ຈຳນວນ 40 ກໍ້/ແກັດ | ແກັດ | 600 |
| 11 | ໃບມອບເງິນສົດ 3P | -ພິມ ໃບມອບເງິນສົດ 3P<br>- ຂະໜາດ 16 x 18.8 cm, ໃຊ້ເຈ້ຍເຄມີ 03 ໃບ/ຊຸດ, (ເຈ້ຍຍີ່ຫໍ້ OJI ເກດ A), ພິມ 04 ສີ, ໃຊ້ກາວແຍກຊຸດ. | - ການຫຸ້ມຫໍ່: 500 ຊຸດ/ຫໍ່, 05ຫໍ່/01ແພັກ ແລະ ຕິດຕົວຢ່າງໃສ່ທຸກຫໍ່ ພ້ອມລະບຸລາຍອຽດຂອງສິນຄ້າ. | ຊຸດ | 2.000.000 |

ຂະແໜງສະໜອງວັດຖຸ ຜູ້ສະຫຼຸບ

**(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)**

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ....../ທຄຕລ, ລົງວັນທີ ..../..../2023

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2021 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ລາຍການເຂົ້າຮ່ວມ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| ຕົວຢ່າງ | ບໍລິສັດ ກຂຄ | ເລກທີxx1 ລົງວັນທີ 01/01/202x | ເລກທີ xx2 ລົງວັນທີ 01/01/202x | ເລກທີxx3 ລົງວັນທີ 01/01/202x | 10 ປີ | ຈຳນວນ 01 ລາຍການ: ປຶ້ມບັນຊີເງິນຝາກປະຢັດ (ຫົວສີຟ້າ) | ທະນາຄານ ຄ, ສະບັນການເງິນ ງ, Micro-Finance ຈ | ປຶ້ມບັນຊີເງິນຝາກປະຢັດ (ຫົວສີຟ້າ) ຂະໜາດ 13 x 7.7 ຊມ, 28ໜ້າ, ພິມ ສີ ດ້ວຍເຈ້ຍປອນ 100ກຼ , ປົກພິມ 4ສີ ດ້ວຍເຈ້ຍລາຍຜ້າ OPALE 160ກຼ, ເຄືອບ PVC, ຫຍິບດ້າຍ+ກາວເຢັນ(ຕິດປົກ), | ລາວ | 1 ປີ ປ່ຽນຄືນໃຫ້ຖ້າສິນຄ້າບໍ່ໄດ້ຄຸນະພາບຕາມທີ່ຕົກລົງກັນໃນເບື້ອງຕົ້ນ | 30 ວັນຫຼັງຈາກໄດ້ຮັບໜັງສືສັ່ງຊື້ ແລະ ຜ່ານແບບ | |
| 1 | | | | | | | | | | | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ xx/01/2023

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: